ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------===000===-------

ທະນາຄານ ແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 757 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 11 NOV 2015

ສຳນັກງານ ທຄຊ
ຂາເຂົ້າ
ເລກທີ 1161
ວັນທີ 12 NOV 2015
ໂທລະສັບ 021 217770

## ແຈ້ງການ

ເຖິງ: - ບັນດາທ່ານຫົວໜ້າກົມ ແລະ ທຽບເທົ່າຂອງ ທຫລ;

- ບັນດາທ່ານອຳນວຍການທະນາຄານທຸລະກິດລັດ-ລັດຮຸ້ນສ່ວນ ແລະ ເອກະຊົນ;
- ບັນດາຜູ້ຈັດການ ສາຂາທະນາຄານຕ່າງປະເທດປະຈຳ ສປປ ລາວ.

**ເລື່ອງ :** ການຈັດຕັ້ງປ້ອງກັນເວນຍາມ ເນື່ອງໃນໂອກາດບຸນນະມັດສະການພຣະທາດຫລວງ ແລະ ວັນຊາດທີ 2 ທັນວາ ປະຈຳປີ 2015

- ອີງຕາມກອງປະຊຸມຂອງຄະນະປ້ອງກັນທະນາຄານແຫ່ງ ສປປ ລາວ ຄັ້ງ ວັນທີ 05/11/2015;
- ເພື່ອເຮັດໃຫ້ການຈັດຕັ້ງປ້ອງກັນເວນຍາມຂອງທົ່ວລະບົບທະນາຄານມີຄວາມເປັນເອກະພາບ ທັງຮັບປະກັນຄວາມ ສະຫງົບ-ປອດໄພ ເປັນຢ່າງດີ.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍແຈ້ງມາຍັງທ່ານຊາບວ່າ: ເພື່ອເປັນການເພີ່ມທະວີການຮັກສາຄວາມປອດໄພຂອງສຳນັກງານອົງການຂອງທ່ານ, ເນື່ອງຈາກວ່າປັດຈຸບັນສະພາບອາກາດແມ່ນຮ້ອນອົບເອົ້າເຮັດໃຫ້ການກໍ່ເກີດອັກຄີໄພມີສູງ ແລະ ປັດຈຸບັນປະກົດການໄຟຟ້າລັດວົງຈອນເລື້ອຍໆ. ສະນັ້ນ, ເພື່ອເປັນການຕ້ານ ແລະ ສະກັດກັ້ນ. ຕໍ່ບັນຫາດັ່ງກ່າວສະເໜີໃຫ້ທ່ານເປັນເຈົ້າການຕິດຕາມກວດກາລະບົບໄຟຟ້າຢູ່ໃນສຳນັກງານຂອງທ່ານໃຫ້ຢູ່ໃນສະພາບທີ່ປົກກະຕິ ແລະ ໃຊ້ງານໄດ້ພ້ອມກັນນັ້ນເພື່ອເປັນການສ້າງຂະບວນການຕ້ອນຮັບວັນສຳຄັນຂອງຊາດເຊັ່ນ: ໃນໂອກາດບຸນນະມັດສະການພຣະທາດຫລວງ ແລະ ວັນຊາດທີ 2 ທັນວາ ປະຈຳປີ 2015 ທີ່ຈະມາເຖິງນີ້ ໂດຍໃຫ້ກຳລັງຕຳຫຼວດ ປ້ອງກັນທີ່ຕັ້ງປະກອບອາວຸດແຕ່ລະຈຸດ ແລະ ເສີມກຳລັງຂອງພະນັກງານຕາມຈຳນວນທີ່ເໝາະສົມຢູ່ແຕ່ລະທະນາຄານເຂົ້າປະຈຳການປ້ອງກັນເວນຍາມເລີ່ມ ແຕ່ວັນທີ 22/11/-4/12/2015 ໃຫ້ມີການປ້ອງກັນເວນຍາມທັງກາງເວັນ ແລະກາງຄືນ ເພື່ອຮັບປະກັນຄວາມສະຫງົບ - ປອດໄພ ໃຫ້ໄດ້ຢ່າງເຕັມສ່ວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການນີ້ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ